ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດວິສາຫະກິດໄຟຟ້າລາວ
ຝ່າຍເຕັກໂນໂລຊີ ການສື່ສານ ຂໍ້ມູນຂ່າວສານ
ພະແນກຄຸ້ມຄອງໜີ້ນັບໄຟທັນສະໄໝ-ລະບົບໃບບິນ

ເລກທີ..261../ຟຟລ.ຝຕກຂ.ພໜບ

ນະຄອນຫຼວງວຽງຈັນ, ວັນທີ.....06 MAY 2026

# ແຈ້ງເຊີນ

**ຮຽນ :** ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດ ເຊເອັນດີຈິຕອນ ຈຳກັດຜູ້ດຽວ ທີ່ນັບຖື.

**ເລື່ອງ :** ການປຶກສາຫາລື ວາງແຜນການຈັດຕັ້ງປະຕິບັດ ບັນດາກອບໜ້າວຽກ ຂອງ ໂຄງການລະຫວ່າງ ບໍລິສັດ ເຊເອັນ ດີຈິຕ້ອນ ຈຳກັດຜູ້ດຽວ ຮ່ວມກັບລັດວິສາຫະກິດໄຟຟ້າລາວ.

- ອີງໃສ່ ສັນຍາການຈັດຈ້າງການບໍລິການຄຸ້ມຄອງ ແລະ ບຳລຸງຮັກສາ ລະບົບ E-Billing, ລະບົບ Payment Gateway ແລະ ລະບົບ Bs2000 ຂອງ ພະແນກຄຸ້ມຄອງລະບົບໜີ້ນັບໄຟ ທັນສະໄໝ ລະບົບໃບບິນ, ຝ່າຍເຕັກໂນໂລຊີ ການສື່ສານ ຂໍ້ມູນຂ່າວສານ, ລົງວັນທີ 28/04/2026.

ພະແນກຄຸ້ມຄອງໜີ້ນັບໄຟ ທັນສະໄໝ-ລະບົບໃບບິນ, ຝ່າຍເຕັກໂນໂລຊີ ການສື່ສານ ຂໍ້ມູນຂ່າວສານ, ລັດວິສາຫະກິດໄຟຟ້າລາວ (ຟຟລ). ຂໍແຈ້ງເຊີນມາຍັງ ບໍລິສັດ ເຊເອັນດີຈິຕອນ ຈຳກັດຜູ້ດຽວ ເພື່ອເຂົ້າຮ່ວມປະຊຸມ ກ່ຽວກັບການດຳເນີນຈັດຕັ້ງປະຕິບັດ ບັນດາກອບໜ້າວຽກຕ່າງໆ ຂອງໂຄງການໂດຍລະອຽດ ລະຫວ່າງ ບໍລິສັດເຊເອັນ ດີຈິຕອນຈຳກັດຜູ້ດຽວ ຮ່ວມກັບ ທີມງານຂອງ ລັດວິສາຫະກິດໄຟຟ້າລາວ, ເຊິ່ງມີລາຍລະອຽດດັ່ງນີ້:

- **ຈຸດປະສົງ:** ເພື່ອປຶກສາຫາລື ວາງແຜນການຈັດຕັ້ງປະຕິບັດ ແຕ່ລະໜ້າວຽກຕາມທີ່ໄດ້ລະບຸໄວ້ໃນ ສັນຍາ.
- **ວັນ ແລະ ເວລາ:** ວັນພະຫັດ, ວັນທີ 07/05/2026, ເວລາ: 09:00ໂມງ-12:00ໂມງ.
- **ສະຖານທີ່:** ຫ້ອງ 301, ຊັ້ນ 03, ຫ້ອງເຮັດວຽກ ທ່ານ ສະດາຈັນ ອິນທະວົງສາ ຮັກສາການ ຫົວໜ້າ ຝ່າຍເຕັກໂນໂລຊີ ການສື່ສານ ຂໍ້ມູນຂ່າວສານ, ຕຶກສະຖາບັນໄຟຟ້າລາວ.
- **ລາຍລະອຽດເພີ່ມຕື່ມຕິດຕໍ່:** ທ່ານ ພອນປະເສີດ ເພັດສີສຸກ 92 568 412.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອສະຫຼະເວລາເຂົ້າຮ່ວມ ຕາມກຳນົດວັນ ແລະ ເວລາດັ່ງກ່າວດ້ວຍ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ,

**ຫົວໜ້າຝ່າຍເຕັກໂນໂລຊີ ການສື່ສານ ຂໍ້ມູນຂ່າວສານ**

**ສະດາຈັນ ອິນທະວົງສາ**

**ຫົວໜ້າພະແນກ ຄຸ້ມຄອງໜີ້ນັບໄຟ ທັນສະໄໝ-ລະບົບໃບບິນ**

**ພອນປະເສີດ ເພັດສີສຸກ**

ຮ່າງເອກະສານ/ຕິດຕໍ່: ທ່ານ ນາງ ສຸພາພອນ ສຸກສີວົງໄຊ, ໂທ 020 288 288 51

ຖະໜົນນິດຕະພາບລາວ-ໄທ, ຕູ້ ປ.ນ 309, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ: (856-21) 316094 ຕໍ່ 1203 ແຟັກ: (856-21) 316118; 263794.ອີເມວ:edlmdo@edl.com.la; ເວັບໄຊ: www.edl.com.la